ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ

ສັນຍາເລກທີ : C3-G-05

0458

ເລກທີ:................/ກພຫຼ

ນະຄອນຫຼວງວຽງຈັນ,ວັນທີ: 27 FEB 2026

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ:** ບໍລິສັດຜູ້ສະໜອງຄອມພິວເຕີ້ ພ້ອມດ້ວຍ ອຸປະກອນໄອທີ

**ເລື່ອງ:** ເຊີນເຂົ້າຮ່ວມປະມູນສົມທຽບລາຄາ ສຳລັບການໜອງ ຄອມພິວເຕີ້ ພ້ອມດ້ວຍ ອຸປະກອນໄອທີ ໃຫ້ ໂຄງການ ຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II.

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ສະບັບເລກທີ 1249/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ສັນຍາ ເງິນກູ້ຢືມ ລະຫວ່າງລັດຖະບານລາວ ແລະ ທະນາຄານໂລກ ສະບັບເລກທີ 7431-LA, ລົງວັນທີ 25 ທັນວາ 2023;
- ອີງຕາມ ແຜນຈັດຊື້-ຈັດຈ້າງ ໂຄງການ ຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II ປະຈຳປີ 2026.

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ (WB) ເພື່ອດຳເນີນການໂຄງການ ຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II (ລພຊ II), ມີຈຸດປະສົງນຳໃຊ້ງົບປະມານສ່ວນໜຶ່ງເພື່ອດຳເນີນການປະມູນຈັດຊື້ ຄອມພິວເຕີ້ ພ້ອມດ້ວຍ ອຸປະກອນໄອທີ ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ.
2. ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການສະໜອງຄອມພິວເຕີ້ ພ້ອມດ້ວຍອຸປະກອນໄອທີ. ໄລຍະການສົ່ງມອບ 45 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງໃຫ້ຄະນະຮັບຜິດຊອບກ່ອນເວລາ 14:00 ໂມງຂອງວັນທີ 12 ມີນາ 2026 ທີ່ ຫ້ອງປະຊຸມຂອງຫ້ອງການປະສານງານໂຄງການ ລພຊ II, ບ້ານ ສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. (ຕຶກມຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ) ໂທລະສັບ 030 9226163 ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງຂອງວັນທີ 12 ມີນາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນຈັດຊື້-ຈັດຈ້າງຂອງໂຄງການ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ

ອາໂນສັກ ແພງທິມມະວົງ